**Protection & Advocacy, Inc.**

**SACRAMENTO LEGAL OFFICE**
100 Howe Avenue, Suite 235 North, Sacramento, CA 95825-8202
Telephone: (916) 488-9950  Fax: (916) 488-9960
Toll Free/TTY/TDD: (800) 776-5746

# ໜັງສືແຈ້ງການ

ເຖິງ: ຝ່າຍທີ່ກ່ຽວຂ້ອງ
ຈາກ: Protection & Advocacy, Inc.
ເລື່ອງ: ການຍື່ນຄໍາຮຽກຮ້ອງສິດຕໍ່ຣັຖບານພາຍໃຕ້ກົດໝາຍວ່າດ້ວຍການຟ້ອງການລະເມີດສິດແຫ່ງຣັຖແຄລີຟໍເນັຍ (Filing Claims Against the Government Under the California Tort Claims Act)
ວັນທີ: 23 ເດືອນແປດ ປີ 2001

---

## 1. ຄໍານໍາ

ໃນຣັຖແຄລີຟໍເນັຍ, ກ່ອນທ່ານສາມາດຟ້ອງອົງການຂອງຣັຖບານ (ຣັຖ, ເມືອງ"ເຄົານ໌ຕີ", ຫລືອົງການ ຂອງຣັຖບານທ້ອງຖິ່ນ) ຫລືພນັກງານຂອງຣັຖເພື່ອຟ້ອງເອົາເງິນຄ່າຊົດເຊີຍ, ທ່ານຕ້ອງຍື່ນ**ຄໍາຮຽກຮ້ອງສິດ** ທີ່ຖືກຕ້ອງຕາມລະບຽບການຂອງກົດໝາຍວ່າດ້ວຍການຟ້ອງການລະເມີດສິດແຫ່ງຣັຖແຄລີ ຟໍເນັຍ. ປະ ມວນກົດໝາຍແຫ່ງຣັຖແຄລີຟໍເນັຍ ມາດຕາ 810-996.6. ນອກຈາກກໍຣະນີຍົກເວັ້ນທີ່ໜ້ອຍໜັກໜ້ ອຍໜາ, **ຈະບໍ່ສາມາດຍື່ນຄໍາຟ້ອງອົງການຂອງຣັຖບານນອກຈາກໄດ້ມີການຍື່ນຄໍາຮຽກຮ້ອງສິດຢ່າງຖືກຕ້ອ ງເປັນລາຍລັກອັກສອນພາຍໃນກໍານົດເວລາຫົກເດືອນ.** ດັ່ງນັ້ນ, ແມ່ນວ່າທ່ານໄດ້ຮັບການເສັຍຫາຍຈາກຣັຖບານແລະໃນປະຈຸບັນນີ້ທ່ານບໍ່ມີຈຸດປະສົງວ່າຈະຟ້ອງກໍຕາມ, ຂໍສເນີໃຫ້ທ່ານຍື່ນຄໍາຮຽກຮ້ອງສິດໄວ້ເພື່ອປົອງກັນສິດແລະສງວນວິທີເລືອກຕ່າງໆຂອງທ່ານ.

ກົດໝາຍວ່າດ້ວຍການຟ້ອງການລະເມີດສິດແຫ່ງຣັຖແຄລີຟໍເນັຍໄດ້ອອກວິທີດໍາເນີນຄະດີທີ່ທ່ານຕ້ອງປະຕິບັດຕາມເມື່ອທ່ານຍື່ນຄໍາຟ້ອງຕໍ່ຣັຖບານເພື່ອຂໍເງິນຄ່າຊົດເຊີຍ. ໜັງສືແຈ້ງການນີ້ບັນລະຍາຍສ່ວນຕ່າງໆທີ່ສໍາຄັນທີ່ສຸດຂອງປະມວນກົດໝາຍນີ້. ໜັງສືແຈ້ງການນີ້ອີງຕາມກົດໝາຍທີ່ບັງຄັບໃຊ້ໃນປະຈຸບັນ, ຊຶ່ງແນ່ນອນວ່າອາດມີການປ່ຽນແປງໄດ້. ອີກຢ່າງໜຶ່ງ, ອີງຕາມປະເພດຄໍາຟ້ອງຂອງທ່ານ, ອາດຕ້ອງໄດ້ປະຕິບັດຕາມຂບວນການແລະກໍານົດເວລາຢ່າງອື່ນ. **ພວກເຮົາຂໍແນະນໍາໃຫ້ທ່ານປຶກສາຫາລືກັບທະນາຍຄວາມທີ່ຊ່ຽວຊານກົດໝາຍສະເພາະທີ່ກ່ຽວຂ້ອງ (ໂຕຢ່າງ, ການໄດ້ຮັບບາດເຈັບສ່ວນໂຕ ຫລື ການກະທໍາຄ**

ວາມຜິດພາດດ້ານການແພດ) **ເພື່ອໄດ້ລາຍລະອຽດຈໍາເພາະເພີ່ມຕື່ມກ່ຽວກັບການຮຽກຮ້ອງສິດແລະກໍານົດເວລາທີ່ທ່ານອາດມີ.**

## 2. ມີຄວາມຈໍາເປັນຍື່ນຄໍາຮຽກຮ້ອງສິດເມື່ອໃດ

ທ່ານສາມາດເລືອກຟ້ອງຣັຖບານເພາະເຫດຜົນຕ່າງໆ. ເຫດຜົນບາງຢ່າງອາດເປັນເພາະວ່າອົງການຂອງຣັຖບານໄດ້ຝ່າຝືນສິດຂອງທ່ານ, ຫລືມີໜ້າທີ່ຮັບຜິດຊອບການຕາຍ, ການໄດ້ຮັບບາດເຈັບທາງຮ່າງກາຍ, ຫລື ຄວາມເສັຍຫາຍຂອງຊັບສິນ. ຖ້າຣັຖບານເຮັດໃຫ້ທ່ານເສັຍຫາຍ, ການເສັຍຫາຍນີ້ເອີ້ນວ່າ "tort (ການລະເມີດສິດ)." ບຸກຄົນທີ່ຍື່ນ " tort claim (ຄໍາຟ້ອງການລະເມີດສິດ)," ປົກກະຕິແລ້ວ, ແມ່ນບຸກຄົນທີ່ໄດ້ຮັບບາດເຈັບ, ເອີ້ນວ່າ "claimant (ໂຈດ)." ໃນກໍຣະນີສ່ວນຫລາຍ, ໃນຖານະເປັນໂຈດ, ທ່ານຕ້ອງຍື່ນຄໍາຟ້ອງການລະເມີດສິດຖ້າວ່າທ່ານພຍາຍາມຟ້ອງເອົາຄ່າຊົດເຊີຍຫລື "ຄ່າເສັຍຫາຍ" ຈາກອົງການຂອງຣັຖບານ. ກົດໝາຍຂອງຣັຖບານ ມາດຕາ 905, 905.2.

## 3. ໃຜສາມາດຍື່ນຄໍາຟ້ອງ

ທ່ານສາມາດຍື່ນຄໍາຟ້ອງຕໍ່ອົງການຂອງຣັຖບານໃນນາມຂອງທ່ານເອງຫລືໃນນາມຂອງຜູ້ໃດຜູ້ໜຶ່ງທີ່ໄດ້ຮັບການເສັຍຫາຍ. ກົດໝາຍຂອງຣັຖບານ ມາດຕາ 910, 910.2. "ການເສັຍຫາຍ" ຈະບໍ່ລວມແຕ່ການຮັບບາດເຈັບທາງຮ່າງກາຍ, ແຕ່ກໍຍັງລວມທັງການເສັຍຫາຍຂອງຊັບສິນສ່ວນໂຕແລະການຝ່າຝືນສິດທີ່ໄດ້ມີການປ້ອງກັນ.

## 4. ຈະຍື່ນຄໍາຮ້ອງແນວໃດ

ທ່ານສາມາດຍື່ນຄໍາຟ້ອງ**ເມືອງ (ເຄົານ໌ຕີ້), ຫລືອົງການຂອງຣັຖບານທ້ອງຖິ່ນ, ຫລືພນັກງານຂອງຣັຖບານ**ໂດຍກົງຕໍ່ຄະນະປົກຄອງຫລືເລຂາຂອງອົງການຣັຖບານ. ທ່ານສາມາດສົ່ງຄໍາຟ້ອງໂດຍຕົນເອງຫລືທາງໄປສະນີ. ກົດໝາຍຂອງຣັຖບານ ມາດຕາ 915(a).

ທ່ານສາມາດຍື່ນຄໍາຟ້ອງ**ຣັຖ, ຫລືອົງການ**ຫລືພນັກງານຂອງຣັຖຕໍ່ສພາຄວບຄຸມໜ່ວຍງານຂອງຣັຖ (SBC), ໂດຍການສົ່ງຄໍາຟ້ອງນັ້ນໄປທີ່ຫ້ອງ SBC ປະຈໍາທ້ອງຖິ່ນໂດຍຕົນເອງ, ຫລືໂດຍການສົ່ງໄປທີ່ສໍານັກງານໃຫຍ່ທາງໄປສະນີ. ກົດໝາຍຂອງຣັຖບານ ມາດຕາ 915(b). ທີ່ຢູ່ຂອງສໍານັກງານໃຫຍ່ SBC ຢູ່ເມືອງແຊກຣາເມນໂທແມ່ນ:

State Board of Control
Government Claims Branch
P.O. Box 3035
Sacramento, CA 95812-3035
(916) 323-3564 (ສຽງ)
(916) 323-5768 (ແຟັກສ)

ທ່ານສາມາດຂໍເອົາແບບຟອມໄດ້ໂດຍໂທຫາ SBC ເລກໂທຟຣີ 1-800-955-0045, ຫລືທ່ານສາມາດ download ຈາກ web site ຂອງ SBC: www.boc.cahwnet.gov/GovClms.htm.

ຖ້າທ່ານສົ່ງຄຳຟ້ອງໂດຍຕົນເອງ, ວັນທີຍື່ນຄຳຟ້ອງແມ່ນວັນທີທີ່ທ່ານສົ່ງເຖິງ. ຖ້າທ່ານສົ່ງຄຳຟ້ອງທາງໄປສະນີ, ວັນທີຍື່ນຄຳຟ້ອງແມ່ນວັນທີທີ່ທ່ານໄດ້ສົ່ງໄປ – ບໍ່ແມ່ນວັນທີທາງອົງການໄດ້ຮັບຄຳຟ້ອງ.

ຖ້າທ່ານຕັດສິນໃຈສົ່ງທາງໄປສະນີ, ພວກເຮົາຂໍແນະນຳໃຫ້ທ່ານສົ່ງເປັນຈົດໝາຍ**ທີ່ໄປສະນີຮັບຮອງພ້ອມດ້ວຍໃບຮັບຮອງຈາກຜູ້ຮັບ.** ອົງການຂອງຣັຖບານບາງອົງການມີແບບຟອມຮຽກຮ້ອງສິດປະຈຳອົງການຂອງເຂົາເອງ. ທ່ານອາດຕ້ອງຕິດຕໍ່ເຂົາເພື່ອໄດ້ຮັບແບບຟອມດັ່ງກ່າວ. ຢ່າງໃດກໍດີ, ຖ້າທ່ານໄດ້ລວມລາຍລະອຽດທີ່ກຳນົດທຸກຢ່າງ (ເບິ່ງທາງລຸ່ມ), ທ່ານບໍ່ຈຳເປັນໃຊ້ແບບຟອມສະເພາະຂອງອົງການນັ້ນດອກ.

## 5. ເນື້ອຫາຂອງຄຳຮຽກຮ້ອງ

ອີງຕາມປະມວນກົດມາຍຂອງຣັຖບານ ມາດຕາ 910, ຄຳຟ້ອງອົງການຂອງຣັຖບານຕ້ອງມີຂໍ້ມູນດັ່ງຕໍ່ລົງໄປນີ້:

A. ຊື່ຂອງທ່ານ (ຊື່ຂອງໂຈດ) ແລະທີ່ຢູ່ທາງໄປສະນີ;

B. ທີ່ຢູ່ທາງໄປສະນີທີ່ທ່ານຕ້ອງການໃຫ້ສົ່ງໃບແຈ້ງການໃຫ້;

C. ວັນທີ, ສຖານທີ່, ແລະສຖານະການທີ່ເປັນເຫດໃຫ້ມີການຮຽກຮ້ອງສິດ (ຄື, ອະທິບາຍສິ່ງທີ່ໄດ້ເກີດຂຶ້ນແລະຄວາມເສັຍຫາຍທີ່ທ່ານໄດ້ຮັບ);

D. ຄຳບັນລະຍາຍທົ່ວໄປເຖິງການບາດເຈັບ, ຄວາມເສັຍຫາຍ, ຫລືການສູນເສັຍ;

E. ຊື່ຂອງພະນັກງານຣັຖບານທີ່ໄດ້ເຮັດໃຫ້ເສັຍຫາຍ, ຖ້າຮູ້ຈັກ;

F. ຖ້າຈຳນວນເງິນໜ້ອຍກວ່າ $10,000, ໃຫ້ລະບຸຈຳນວນເງິນທີ່ຟ້ອງ (ລວມທັງຈຳນວນເງິນຄ່າເສັຍຫາຍໃນອະນະຄົດໂດຍປະມານ) ແລະເຫດຜົນການຄຳນວນຈຳນວນນັ້ນ, ແລະ

G. ຖ້າຈຳນວນເງິນຫລາຍກວ່າ $10,000, ທ່ານບໍ່ຈຳເປັນກຳນົດຈຳນວນສະເພາະຕາມແບບຟອມຮຽກຮ້ອງສິດ. ຢ່າງໃດກໍດີ, ທ່ານຕ້ອງກຳນົດວ່າຈະເປັນຄະດີປະເພດ "ຄະດີແພ່ງຈຳກັດ" ຫລືບໍ່. ກົດໝາຍຂອງຣັຖບານ ມາດຕາ 910(f) ແລະລະບຽບການຂອງປະມວນກົດໝາຍແພ່ງແຫ່ງຣັຖແຄລິຟໍເນັຍ ມາດຕາ 85, 86.

ເລື່ອງວ່າຄະດີຈະເປັນ "ຄະດີແພ່ງຈຳກັດ" ຈະຂຶ້ນຢູ່ກັບຈຳນວນເງິນຄ່າເສັຍຫາຍທີ່ທ່ານຮ້ອງຂໍແລະສິ່ງອື່ນໆທີ່ ທ່ານຮ້ອງຂໍໃຫ້ອົງການຂອງຣັຖບານເຮັດ. ໂດຍທົ່ວໄປ, ຄະດີຈະເປັນຄະດີແພ່ງຈຳກັດ, ຖ້າຈຳນວນເງິ ນທີ່ທ່ານຮຽກຮ້ອງ**ໜ້ອຍກວ່າ** $25,000

(ໂດຍບໍ່ລວມຄ່າທະນາຍຄວາມແລະຄ່າໃຊ້ຈ່າຍຕ່າງໆທີ່ສົມເ ຫດສົມຜົນ) **ແລະ**ທ່ານ**ບໍ່ຮຽກຮ້ອງສິ່ງໃດໆດັ່ງຕໍ່ໄປນີ້:**

1. ຄໍາສັ່ງສານຫ້າມຖາວອນ (ຄື, ຄໍາສັ່ງສານທີ່ອອກຫລັງຈາກການພິຈາຣະນາເທື່ອສຸດທ້າຍທີ່ຫ້າມບໍ່ໃຫ້ອົງການຂອງຣັຖບານດໍາເນີນການສິ່ງທີ່ທ່ານໄດ້ຟ້ອງນັ້ນ);
2. ການກໍານົດສິດໃນຊັບສິນທີ່ດິນ;
3. ການບັງຄັບຄໍາສັ່ງຂອງສານພາຍໃຕ້ປະມວນກົດໝາຍວ່າດ້ວຍຄອບຄົວ; ຫລື
4. ວິທີການແກ້ໄຂທີ່ສານກໍານົດສິດໃຫ້ແຕ່ລະຝ່າຍ (ການຮ້ອງຂໍໃຫ້ສານອອກຄໍາຊີ້ແຈງແລະກໍານົດສິດທິແລະຄວາມສໍາພັນທາງດ້ານກົດໝາຍລະຫວ່າງແຕ່ລະຝ່າຍໂດຍບໍ່ມີຄໍາສັ່ງທີ່ບັງຄັບ), ຍົກເວັ້ນແຕ່ມີອະນຸຍາດພາຍໃຕ້ລະບຽບການຂອງປະມວນກົດໝາຍແພ່ງ ມາດຕາ 86.

ລະບຽບການຂອງປະມວນກົດໝາຍແພ່ງ ມາດຕາ 580.

## 6. ກໍານົດເວລາຕ່າງໆ

ກົດໝາຍວ່າດ້ວຍການຟ້ອງການລະເມີດສິດແຫ່ງຣັຖແຄລີຟໍເນັຍກໍານົດເວລາຢ່າງເຂັ້ມງວດທີ່ທ່ານຕ້ອງປະຕິບັດຕາມໃນການຍື່ນຄໍາຮຽກຮ້ອງສິດຕໍ່ອົງການຂອງຣັຖບານ. ທ່ານຕ້ອງຍື່ນຄໍາຮຽກຮ້ອງ**ເລື່ອງການເສັຍຫາຍສ່ວນໂຕ** (ຄື, ອີງຕາມການຕາຍ, ການໄດ້ຮັບບາດເຈັບທາງຮ່າງກາຍ, ຫລືການເສັຍຫາຍທາງຊັບສິນສ່ວນໂຕ) ພາຍໃນ**ຫົກເດືອນ**ນັບຈາກວັນທີທີ່ໄດ້ມີການເສັຍຫາຍ. ກົດໝາຍຂອງຣັຖບານ ມາດຕາ 911.2.

ຖ້າທ່ານບໍ່ຮູ້ເຫດຜົນຂອງການຍື່ນຄໍາຮ້ອງໃນເວລາທີ່ເກີດຄວາມເສັຍຫາຍ (ໂຕຢ່າງ, ຄະດີການກະທໍາຄວາມຜິດພາດດ້ານການແພດບາງກໍຣະນີ), ກໍານົດເວລາຫົກເດືອນຈະຕັ້ງຕົ້ນຕັ້ງແຕ່ເວລາທີ່ທ່ານໄດ້ຮູ້ເຖິງເຫດຜົນ, ຫລືທີ່ທ່ານສົມຄວນໄດ້ຮັບຮູ້ເຖິງເຫດຜົນນັ້ນ. ເບິ່ງ, ໂຕຢ່າງ, *Whitfield v. Roth* (1974) 10 C.3d 874, 112 Cal Rptr 540.

## 7. ການຮຽກຮ້ອງສິດທີ່ຫລ້າຊ້າ

ລາງເທື່ອ, ໂຈດລໍຖ້າເຫິງກວ່າຫົກເດືອນກ່ອນຈະຍື່ນຄໍາຮຽກຮ້ອງການເສັຍຫາຍສ່ວນໂຕ. ກົດໝາຍດໍາເນີນການຮຽກຮ້ອງສິດສອງປະເພດທີ່ບໍ່ຄືກັນ: ການຮຽກຮ້ອງສິດທີ່ຍື່ນຫລ້າຊ້າແບບທົ່ວໄປແລະການຮຽກຮ້ອງສິດທີ່ຍື່ນຫລ້າຊ້າທີ່ມີ "ຄໍາຮ້ອງຂໍຍື່ນຄໍາຟ້ອງທີ່ຫລ້າຊ້າ" ລັດຕິດນໍາ.

ຖ້າທ່ານບໍ່ຍື່ນຄໍາຟ້ອງເລື່ອງການເສັຍຫາຍສ່ວນໂຕພາຍໃນຫົກເດືອນຈາກວັນທີທີ່ທ່ານໄດ້ຮັບຄວາມເສັຍຫາຍ, ທ່ານອາດເສັຍໂອກາດໃນການຟ້ອງຄະດີ, ຍົກເວັ້ນແຕ່ທ່ານຈະຂຽນຈົດໝາຍໄປຫາອົງການຂອງຣັຖບານທີ່ກ່ຽວຂ້ອງແລະ "ຂໍອະນຸຍາດ" ຍື່ນຄໍາຮຽກຮ້ອງສິດທີ່ຫລ້າຊ້າ. ກົດໝາຍຂອງຣັຖບານ ມາດຕາ 911.4(a). ໃນຈົດໝາຍ, ທ່ານຕ້ອງບອກເຫດຜົນວ່າທ່ານບໍ່ໄດ້ຍື່ນຄໍາຮຽກຮ້ອງສິດພາຍໃນຫົກເດືອ

ມາຈາກວັນທີທີ່ໄດ້ຮັບຄວາມເສັຍຫາຍ, ແລະທ່ານຕ້ອງຍື່ນຄໍາຮຽກຮ້ອງສິດນໍາ. ກົດໝາຍຂອງຣັຖບານ ມາດຕາ 911.4(b). ການຍື່ນຄໍາຮຽກຮ້ອງສິດທີ່ຫລ້າຊ້າມີເຫດຜົນທີ່ໃຊ້ການໄດ້ສີ່ຢ່າງ:

1. ຄວາມຜິດພາດ, ການບໍ່ຕັ້ງໃຈ, ການບໍ່ຄາດຄິດ ຫລື ການເມີນເສີຍທີ່ອະໄພໄດ້;
2. ການບໍ່ບັນລຸນິຕິພາວະ (ໂຈດບໍ່ທັນເຖິງກະສຽນໃນລະຫວ່າງຫົກເດືອນທີ່ກໍານົດນັ້ນ);
3. ການຂາດຄວາມສາມາດທາງດ້ານຮ່າງກາຍຫລືທາງດ້ານຄວາມຄິດ; ແລະ
4. ການຕາຍຂອງໂຈດ.

(ເບິ່ງກົດໝາຍຂອງຣັຖບານ ມາດຕາ 911.6(b))

ເພື່ອຂໍຍື່ນຄໍາຮຽກຮ້ອງສິດທີ່ຫລ້າຊ້າ, ທ່ານຕ້ອງຂຽນຈົດໝາຍໄປຫາອົງການຂອງຣັຖບານພາຍໃນເວລາອັນເໝາະສົມບໍ່ເກີນໜຶ່ງປີນັບຕັ້ງແຕ່ມື້ເກີດການເສັຍຫາຍ. ກົດໝາຍຂອງຣັຖບານ ມາດຕາ 911.4(b). "ຄວາມມີເຫດຜົນ" ຂອງການຫລ້າຊ້າຈະໄດ້ຮັບການພິຈາຣະນາເປັນກໍຣະນີໄປ, ແລະໃນ ບາງກໍຣະນີ, ການຫລ້າຊ້າພຽງເລັກໜ້ອຍກໍອາດຖືໄດ້ວ່າບໍ່ມີເຫດຜົນ. **ຈັ່ງຊັ້ນທ່ານຄວນຂໍຍື່ນຄໍາຮຽກຮ້ອງສິດທີ່ຫລ້າຊ້າໃຫ້ໄວເທົ່າທີ່ຈະໄວໄດ້.**

## 8. ຫລັງຈາກໄດ້ຍື່ນຄໍາຮຽກຮ້ອງສິດແລ້ວຈະມີການດໍາເນີນການແນວໃດ

ຫລັງຈາກທ່ານຍື່ນຄໍາຮຽກຮ້ອງສິດແລ້ວ, ທາງສະພາ[1]ຕ້ອງໃຫ້ຄໍາຕອບ (ອະນຸຍາດຫລືປະຕິເສດຄໍາຮຽກຮ້ອງສິດທັງໝົດຫລືບາງສ່ວນ) ພາຍໃນ 45 ມື້. ຖ້າທາງສພາບໍ່ຕອບໃນມື້ທີ 45, ກໍຖືວ່າການຮຽກຮ້ອງສິດນັ້ນໄດ້ຖືກປະຕິເສດ. ກົດໝາຍຂອງຣັຖບານ ມາດຕາ 912.6(a), 912.4(c).

## 9. ການຟ້ອງອົງການຂອງຣັຖບານຖ້າຄໍາຮຽກຮ້ອງສິດໄດ້ຖືກປະຕິເສດ

ທາງສພາຕ້ອງແຈ້ງທ່ານໃຫ້ຮູ້ເຖິງການດໍາເນີນການຂອງສພາເລື່ອງຄໍາຮຽກຮ້ອງສິດ (ຫລືການປະຕິເສດຄໍາຮຽກຮ້ອງສິດເນື່ອງຈາກການບໍ່ດໍາເນີນການຂອງສພາ). ຖ້າສພາປະຕິເສດຄໍາຮຽກຮ້ອງສິດທັງໝົດຫລືບາງສ່ວນ, ທ່ານມີເວລາ**ຫົກເດືອນ**ນັບຕັ້ງແຕ່ວັນທີສົ່ງການແຈ້ງຄໍາຕອບທາງໄປສະນີ ເພື່ອຍື່ນຄະດີຟ້ອງອົງການຂອງຣັຖບານດັ່ງກ່າວ. ປະມວນກົດໝາຍ ມາດຕາ 913, 945.6(a)(1).

[1] ກົດໝາຍຂອງຣັຖບານ ມາດຕາ 900.2 ຕີຄວາມໝາຍ "ສພາ" ເປັນ:

(a) ໃນກໍຣະນີອົງການຣັຖບານປະຈໍາທ້ອງຖິ່ນ, ແມ່ນຄນະປົກຄອງຂອງອົງການ ຣັຖບານປະຈໍາທ້ອງຖິ່ນດັ່ງກ່າວ ແລະ

(b) ໃນກໍຣະນີຂອງຣັຖ, ແມ່ນສພາຄວບຄຸມໜ່ວຍງານຂອງຣັຖ (SBC)

ຖ້າສພາຂາດການແຈ້ງທ່ານເຖິງການດຳເນີນການ (ຫລືການບໍ່ດຳເນີນການ), ການຂາດການແຈ້ງທ່ານນັ້ນຈະຖືວ່າເປັນການປະຕິເສດຄຳຮຽກຮ້ອງສິດ (ດັ່ງທີ່ໄດ້ອະທິບາຍຂ້າງເທິງ) ແລະທ່ານມີເວລາ**ສອງປີ**ນັບຕັ້ງແຕ່ເກີດຄວາມເສັຍຫາຍເພື່ອຍື່ນຄຳຟ້ອງ. ກົດໝາຍຂອງຣັຖບານ ມາດຕາ 945.6(a)(2).

ຖ້າທ່ານບໍ່ສາມາດຍື່ນຄຳຟ້ອງພາຍໃນເວລາກຳນົດເນື່ອງຈາກວ່າທ່ານຖືກຄຸກ, ທ່ານຕ້ອງຍື່ນຄຳຟ້ອງພາຍໃນ**ຫົກເດືອນ**ນັບຈາກເວລາທີ່ທ່ານໄດ້ສິດຄືນ (ຄື, ເວລາທີ່ໄດ້ຖືກປົດປ່ອຍ). ກົດໝາຍຂອງຣັຖບານ ມາດຕາ 945.6(b).

**ຂໍຊ້ຳອີກ, ດັ່ງທີ່ໄດ້ອະທິບາຍຂ້າງເທິງ, ວ່າຄະດີຂອງທ່ານອາດມີກຳນົດເວລາແລະຂບວນການຢ່າງອື່ນຂຶ້ນກັບປະເພດຄະດີ, ພວກເຮົາຈຶ່ງສເນີໃຫ້ທ່ານປຶກສາທະນາຍຄວາມເພື່ອຈະໄດ້ຂໍ້ມູນຕື່ມສະເພາະສຖານະການຂອງທ່ານ.**